# ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບຂອງ ສປປ ລາວ
# "ຫ້ອງການຈົດທະບຽນ"

**ພາກສະເໜີ**

ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບ(ຫ້ອງການຈົດທະບຽນ)ໄດ້ສ້າງຕັ້ງຂຶ້ນໂດຍກະຊວງການເງິນ. ຫ້ອງການຈົດທະບຽນດ້ວຍສັງຫາລິມະຊັບ ດໍາເນີນການຈົດທະບຽນດ້ວຍລະບົບຄອມພິວເຕີສູນກາງ ທີ່ໃຫ້ບໍລິການທົ່ວສປປລາວ.ຫ້ອງການຈົດທະບຽນອະນຸຍາດໃຫ້ບຸກຄົນ ແລະ ສະຖາບັນຕ່າງໆຈົດທະບຽນການຄໍ້າປະກັນຂອງຕົນໃນສັງຫາລິມະຊັບ(ຊັບສິນສ່ວນບຸກຄົນ, ພາຫະນະກົນຈັກ, ບັນຊີສິນຄ້າໃນສາງ, ໜີ້ທີ່ຕ້ອງຮັບ, ຜົນຜະລິດແລະ ອື່ນໆ).

**ຕົວຢ່າງ:** ຖ້າລົດຈັກຂອງທ່ານໄດ້ນໍາເອົາໄປຄໍ້າປະກັນກັບສະຖາບັນປ່ອຍເງິນກູ້ເພື່ອເປັນຫຼັກຊັບຄໍ້າປະກັນໃນການແລກປ່ຽນເປັນສິນເຊື່ອ, ຫຼັງຈາກນັ້ນລົດຈັກຂອງທ່ານຈະກາຍເປັນຫຼັກຊັບຄໍ້າປະກັນສໍາລັບການກູ້ຢືມເງິນຂອງທ່ານ ແລະ ຜູ້ໃຫ້ກູ້ຢືມຈະກາຍເປັນເຈົ້າໜີ້ທີ່ມີຫຼັກຊັບຄໍ້າປະກັນ ແລະ ມີຫຼັກຊັບຄໍ້າປະກັນໃນລົດຈັກຂອງທ່ານ.ຫ້ອງການຈົດທະບຽນມີຖານຂໍ້ມູນໜຶ່ງເຊິ່ງເປັນບ່ອນທີ່ສາມາດຈົດທະບຽນການຄໍ້າປະກັນໃນສັງຫາລິມະຊັບ ແລະ ສາມາດຊອກຄົ້ນຫາການຄໍ້າປະກັນດ້ວຍສັງຫາລິມມະຊັບໄດ້.

## ຂອບເຂດນິຕິກໍາທີ່ຕິດພັນການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບມີຫຍັງແດ່?

- ອີງຕາມ ກົດໝາຍວ່າດ້ວຍການຄໍ້າປະກັນປະຕິບັດສັນຍາສະບັບເລກທີ 06/ສພຊ, ລົງວັນທີ 20 ພຶດສະພາ 2005.
- ອີງຕາມ ດໍາລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄໍ້າປະກັນປະຕິບັດສັນຍາສະບັບເລກທີ 0178/ນຍ, ລົງວັນທີ20 ມິຖຸນາ 2011 ວ່າດ້ວຍການຄຸ້ມຄອງຫ້ອງການ ແລະ ລະບົບຈົດທະບຽນການຄໍ້າປະກັນ. ນິຕິກໍາດັ່ງກ່າວສາມາດເບິ່ງໄດ້ໃນເວບໄຊລະບົບຈົດທະບຽນຂອງ ກະຊວງການເງິນ ທີ່ www.mof.gov.la/str

## ຫ້ອງການຈົດທະບຽນການຄໍ້າປະກັນດ້ວຍສັງຫາລິມະຊັບໃຫ້ຜົນປະໂຫຍດແນວໃດ?

**ຄວາມສະດວກສະບາຍ**: ຫ້ອງການຈົດທະບຽນ ໄດ້ສະໜອງການເຂົ້າເຖິງຂໍ້ມູນແບບທາງໄກຈາກຫ້ອງການ ຫຼື ເຮືອນຂອງທ່ານ.ຍັງສາມາດເຂົ້າເຖິງຂໍ້ມູນໄດ້ຢູ່ທີ່ກົມຄຸ້ມຄອງຊັບສິນແຫ່ງລັດຂອງກະຊວງການເງິນ.

**ການເຂົ້າເຖິງຂໍ້ມູນທົ່ວປະເທດ**: ຫ້ອງການຈົດທະບຽນອະນຸຍາດໃຫ້ລູກຄ້າຂອງຫ້ອງການຈົດທະບຽນການຄໍ້າປະກັນແລະ ຊອກຄົ້ນຫາແຈ້ງການຈົດທະບຽນທັງໝົດທີ່ໄດ້ຈົດທະບຽນໃນທົ່ວປະເທດດ້ວຍການດໍາເນີນການໃນຄັ້ງດຽວເທົ່ານັ້ນ ທີ່ເວບໄຊ: www.mof.gov.la/str

ຫ້ອງການຈົດທະບຽນຄໍ້າປະກັນດ້ວຍສັງຫາລິມະຊັບ ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ.
ໂທລະສັບ/ແຟັກ: (856-21) 900905. ອີເມລ໌: reg_simp@mof.gov.la. ເວບໄຊຕ໌: www.mof.gov.la/str
Registry Office for Security Interests in Moveable Property. State Assets Management Department, Ministry of Finance.
Tel/Fax: (856-21) 900905. Email: reg_simp@mof.gov.la. Website: www.mof.gov.la/str

**ການຕອບສະໜອງການບໍລິການ**: ສາມາດເຂົ້າເຖິງຫ້ອງການຈົດທະບຽນນອກຊົ່ວໂມງລັດຖະການ ຊຶ່ງຂຶ້ນກັບການບໍາລຸງຮັກສາລະບົບ.ໂດຍທົ່ວໄປແລ້ວ ຫ້ອງການຈົດທະບຽນຈະໃຫ້ບໍລິການ 24ຊົ່ວໂມງ/7ວັນ.

**ການປ້ອງກັນ**: ຫ້ອງການຈົດທະບຽນສະໜອງການເຂົ້າເຖິງຂໍ້ມູນຂ່າວສານໄດ້ງ່າຍ ຊຶ່ງປັບປຸງການປ້ອງກັນສໍາລັບເຈົ້າໜີ້ ແລະ ລູກໜີ້ ເພື່ອເຮັດໃຫ້ນິຕິກໍາມີປະສິດທິພາບ ແລະ ຄວາມໂປ່ງໃສຫຼາຍຂຶ້ນ.

**ຄວາມຖືກຕ້ອງ**: ມີການສະໜອງຂໍ້ມູນໂດຍກົງໂດຍລູກຄ້າ ຊຶ່ງຮັບປະກັນຄວາມຖືກຕ້ອງ ແລະ ທັນເວລາ, ເຮັດໃຫ້ສາມາດຫຼຸດຜ່ອນຄວາມສ່ຽງ ແລະ ມີຄວາມຮັບຜິດຊອບໃນການບໍລິການ.

*ສອບຖາມຂໍ້ມູນເພີ່ມຕື່ມໃຫ້ເຂົ້າເວັບໄຊຕ໌ຂອງຫ້ອງການຈົດທະບຽນ ຫຼື ຕິດຕໍ່ຫາ ສູນບໍລິການລູກຄ້າຂອງຫ້ອງການຈົດທະບຽນ ທີ່ເບີໂທ/ແຟັກ: + 856-21 900 905, ເວັບໄຊຂອງຫ້ອງການຈົດທະບຽນ* www.mof.gov.la/str *ຫຼື ໄປທີ່ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ທີ່ນະຄອນຫຼວງວຽງຈັນ.*